ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ກົມແຜນການ ແລະ ການຮ່ວມມືສາກົນ
ຂາເຂົ້າ ເລກທີ 1134
ວັນທີ 28/8/2023

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ເລກທີ: 4477 /ຕປທ

ນະຄອນຫຼວງວຽງຈັນ, ວັນທີ 23 ສິງຫາ 2023

# ຂໍ້ຕົກລົງ

- ອີງຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 013/ນຍ, ລົງວັນທີ 08 ມັງກອນ 2010 ວ່າດ້ວຍ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ.
- ອີງຕາມ ໜັງສືສະເໜີຂອງກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ, ສະບັບເລກທີ 303/ຖວທ, ລົງວັນທີ 07 ກໍລະກົດ 2023;
- ອີງຕາມສະໂໜດນຳສົ່ງຂອງອົງການ Care International ປະຈຳ ສປປ ລາວ, ສະບັບເລກທີ CARE/2023/141, ລົງວັນທີ 09 ສິງຫາ 2023 ກ່ຽວກັບ ການນຳສົ່ງບົດບັນທຶກຄວາມເຂົ້າໃຈສະບັບປັບປຸງ.

## ລັດຖະມົນຕີ ຕົກລົງອະນຸມັດ:

<u>**ມາດຕາ 1:**</u> ຮັບເອົາໂຄງການຊ່ວຍເຫຼືອລ້າຈາກອົງການ CARE International ປະຈຳ ສປປ ລາວ.

<u>**ມາດຕາ 2:**</u> ລາຍລະອຽດຂອງໂຄງການມີດັ່ງນີ້:

- <u>**ຊື່ໂຄງການ**</u>: ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງພາກສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ (Green Action through Media, Mass Organization and Civil Society in Laos (GAMCIL)).
- <u>**ທີ່ຕັ້ງໂຄງການ**</u>: ກົມສື່ມວນຊົນ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
- <u>**ໄລຍະການຈັດຕັ້ງປະຕິບັດ**</u>:ເລີ່ມແຕ່ມື້ໄດ້ຮັບອະນຸມັດ ຈົນເຖິງ ວັນທີ 28 ກຸມພາ 2027
- <u>**ມູນຄ່າໂຄງການ**</u>: 1.026.887 ເອີໂຣ (ໜຶ່ງລ້ານຊາວຫົກພັນແປດຮ້ອຍແປດສິບເຈັດເອີໂຣ)
- <u>**ແຫຼ່ງທຶນ**</u>: ສະຫະພາບເອີຣົບ
- <u>**ຈຸດປະສົງ**</u>: ຈຸດປະສົງລວມຂອງໂຄງການແມ່ນການປະກອບສ່ວນເພື່ອສົ່ງລວມ, ສ້າງ ແລະ ພັດທະນາຂໍ້ມູນສີຂຽວ ເພື່ອໃຫ້ປະຊາຊົນເຂົ້າເຖິງຂໍ້ມູນຂ່າວສານດັ່ງກ່າວ ແລະ ປົກປ້ອງສິດເສລີພາບຂັ້ນພື້ນຖານໂດຍໃຫ້ສອດຄ່ອງກັບກົດໝາຍແຫ່ງຊາດ ແລະ ສັນຍາສາກົນ (ອີງຕາມເອກະສານເປົ້າໝາຍການພັດທະນາແບບຍືນຍົງ SGD 16.10).
- <u>**ກິດຈະກຳຫຼັກ**</u>:

- 1. ສື່ມວນຊົນຂອງລັດ ແລະ ສື່ພາກສັງຄົມທີ່ໄດ້ລົງທະບຽນຖືກຕ້ອງຕາມກົດໝາຍ ສປປ ລາວ ຈະໄດ້ຮັບການຍົກລະດັບທັກສະດ້ານວິຊາຊີບ ລວມທັງການນຳໃຊ້ເຕັກໂນໂລຊີແບບດິຈິຕອນ ແລະ ສື່ແບບໃໝ່, ເພື່ອເຮັດໃຫ້ປະຊາຊົນໄດ້ຮັບຂໍ້ມູນຂ່າວສານທີ່ມີຄຸນນະພາບ ໂດຍຜ່ານການລາຍງານທີ່ມີຄວາມຮັບຜິດຊອບ ແລະ ເປັນມືອາຊີບ ກ່ຽວກັບການພັດທະນາສີຂຽວ.

2. ບັນດາຜູ້ເຂົ້າຮ່ວມຈາກພາກສັງຄົມ (ອົງການຈັດຕັ້ງພາກສັງຄົມທີ່ກ່ຽວຂ້ອງກັບການພັດທະນາສີຂຽວ, ຜູ້ນຳໃຊ້ສື່ສັງຄົມອອນລາຍທົ່ວໄປ, ຜູ້ສ້າງວິດີໂອ ແລະ ຮູບເງົາ) ໄດ້ຍົກລະດັບຄວາມຮູ້ ແລະ ຄວາມສາມາດ ຂອງຕົນເອງໃນການປະກອບສ່ວນສ້າງນະໂຍບາຍ, ຕິດຕາມ ແລະ ຊຸກຍູ້ ວຽກງານການພັດທະນາສີຂຽວທີ່ມີຜົນກະທົບຕໍ່ຊຸມຊົນ ລວມທັງການນຳໃຊ້ເຕັກໂນໂລຊີດີຈີຕອນ ແລະ ສື່ແບບໃໝ່ຢ່າງສ້າງສັນ.

- **ຜູ້ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການ:**
  - ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ເປັນຜູ້ຄຸ້ມຄອງ ແລະ ຊີ້ນຳມະຫາພາກ;
  - ກົມສື່ມວນຊົນ ແລະ ສະມາຄົມນັກຂ່າວແຫ່ງ ສປປ ລາວ ຮ່ວມກັບ ອົງການ Care International ເປັນຜູ້ຈັດຕັ້ງປະຕິບັດຕົວຈິງ.

<u>ມາດຕາ 3</u>: ກະຊວງ ແລະ ອົງການ ຕ້ອງສົມທົບກັນ ເພື່ອຈັດພິທີເຊັນບົດບັນທຶກຄວາມເຂົ້າໃຈນຳກັນ ກ່ອນຈະດຳເນີນການປະຕິບັດໂຄງການ ພາຍໃນ 30 ວັນ ຫຼັງຈາກມື້ລົງລາຍເຊັນຂໍ້ຕົກລົງສະບັບນີ້.

<u>ມາດຕາ 4</u>: ກະຊວງ, ອົງການ ແລະ ຂະແໜງການ ຕ້ອງມີການປະສານງານເປັນຢ່າງດີ, ມີຄວາມຮັບຜິດຊອບຢ່າງເດັດຂາດໃນການຄຸ້ມຄອງໃຫ້ມີປະສິດທິຜົນ, ຈັດຕັ້ງປະຕິບັດໂຄງການທີ່ອະນຸມັດໃຫ້ປະສົບຜົນສຳເລັດຕາມຈຸດປະສົງທີ່ວາງໄວ້ ແລະ ສົ່ງບົດສະຫຼຸບລາຍງານການຈັດຕັ້ງປະຕິບັດ ປະຈຳ 03 ເດືອນ, 06 ເດືອນ ແລະ ປະຈຳປີ ໃຫ້ ກະຊວງການຕ່າງປະເທດ ແລະ ພະແນກການຕ່າງປະເທດແຂວງ.

<u>ມາດຕາ 5</u>: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຊັນແທນລັດຖະມົນຕີ

ຮອງລັດຖະມົນຕີ

ທອງຜ່ານ ສະຫວັນເພັດ

<u>ບ່ອນນຳສົ່ງ:</u>

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 01 ສະບັບ
- ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ 01 ສະບັບ
- ກະຊວງປ້ອງກັນຄວາມສະຫງົບ 01 ສະບັບ
- ກະຊວງແຜນການ ແລະ ການລົງທຶນ 01 ສະບັບ
- ກະຊວງການເງິນ 01 ສະບັບ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ...792.../ຖວທ

ນະຄອນຫຼວງວຽງຈັນ, ວັນທີ...30 ສິງຫາ 2023...

## ຂໍ້ຕົກລົງ

**ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ໂຄງການສ້າງຄວາມເຂັ້ມແຂງ ໃຫ້ສື່ມວນຊົນໂດຍການມີສ່ວນຮ່ວມຂອງ ອົງການຈັດຕັ້ງພາກສັງຄົມທີ່ກ່ຽວຂ້ອງ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ.**

- ອີງຕາມ ດຳລັດວ່າດ້ວຍການແຕ່ງຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ຂໍ້ຕົກລົງອະນຸມັດໂຄງການ ຈາກກະຊວງການຕ່າງປະເທດ ສະບັບເລກທີ 4477/ຕປທ, ລົງວັນທີ 23 ສິງຫາ 2023.

## ລັດຖະມົນຕີ ຕົກລົງ:

**ມາດຕາ 1 ແຕ່ງຕັ້ງ ຄະນະຊີ້ນຳໂຄງການ:**

| | | |
|---|---|---|
| 1. ທ່ານ ໂພສີ ແກ້ວມະນີວົງ, | ຮອງລັດຖະມົນຕີ ກະຊວງ ຖວທ | ເປັນຫົວໜ້າ |
| 2. ທ່ານ ສົມສະຫວາດ ພົງສາ, | ຫົວໜ້າກົມສື່ມວນຊົນ | ເປັນຮອງ |
| 3. ທ່ານ ທອງຫຼໍ່ ດວງສະຫວັນ, | ອຳນວຍການໜັງສືພິມພາສາຕ່າງປະເທດ | ເປັນຮອງ |
| 4. ທ່ານ ນາງ ມະນີພັນ ຫຼວງສີສົງຄາມ, | ຮອງຫົວໜ້າກົມ ແຜນການ ແລະ ການຮ່ວມມືສາກົນ | ຄະນະ |
| 5. ທ່ານ ວໍລະສັກ ປຣະວົງວຽງຄຳ, | ຮອງຜູ້ອຳນວຍການວິທະຍຸກະຈາຍສຽງແຫ່ງຊາດລາວ | ຄະນະ |
| 6. ທ່ານ ຜູ້ຕາງໜ້າກົມອົງການຈັດຕັ້ງສາກົນ, ກະຊວງການຕ່າງປະເທດ | | ຄະນະ |

**ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຄະນະຊີ້ນຳໂຄງການ ຂັ້ນສູນກາງ ມີດັ່ງນີ້:**

- ອະນຸມັດແຜນປະຕິບັດງານຕາມທີ່ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ;
- ອະນຸມັດງົບປະມານລະອຽດຕາມທີ່ໄດ້ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ;
- ຮັບປະກັນການມີສ່ວນຮ່ວມຢ່າງເຕັມທີ່ຂອງສະມາຊິກຄະນະຊີ້ນຳລວມໃນການຈັດຕັ້ງປະຕິບັດໂຄງການ;
- ມີສ່ວນຮ່ວມໃນການເຂົ້າຮ່ວມກອງປະຊຸມກວດກາ, ຕິດຕາມ, ປະເມີນຜົນກິດຈະກຳ ແລະ ທຸກກິດຈະກຳທີ່ຖືກອານຸມັດໃຫ້ຈັດຕັ້ງປະຕິບັດ; ປະຈຳ 6 ເດືອນ, ປະຈຳປີ, ເຄິ່ງສະໄໝ ແລະ ສະຫຼຸບໂຄງການ;
- ອະນຸມັດ ແລະ ຮັບຮອງເອົາແຜນການຈັດຕັ້ງປະຕິບັດວຽກງານຕົວຈິງທຸກຄັ້ງ, ກຳນົດເປົ້າໝາຍທີ່ຈະເຂົ້າມາຝຶກອົບຮົມ, ເປົ້າໝາຍຄູຝຶກ ແລະ ບັນດາອົງການຈັດຕັ້ງພາກສັງຄົມທີ່ກ່ຽວຂ້ອງ, ແຜນງົບປະມານໃນແຕ່ລະໄລຍະ, ການຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການ, ການສະຫຼຸບລາຍງານດ້ານງົບປະມານຂອງໂຄງການ ແລະ ການປະເມີນຜົນຕົວຈິງຂອງການຈັດຕັ້ງປະຕິບັດໂຄງການ;
- ແລະ ວຽກອື່ນໆ ຕາມການຕົກລົງຂອງຄະນະຊີ້ນຳກິດຈະກຳ ແລະ ຜູ້ໃຫ້ທຶນ.

**ມາດຕາ 2 ແຕ່ງຕັ້ງຄະນະທີ່ປຶກສາໂຄງການ:**

1. ທ່ານ ສະຫວັນຄອນ ຣາຊມຸນຕຣີ, ປະທານສະມາຄົມນັກຂ່າວ ແຫ່ງ ສປປ ລາວ
2. ທ່ານ ສູນທອນ ຄັນທະວົງ, ຮອງປະທານ ສະມາຄົມນັກຂ່າວແຫ່ງ ສປປ ລາວ

**ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຄະນະທີ່ປຶກສາໂຄງການ ມີດັ່ງນີ້:**

- ໃຫ້ຄຳປຶກສາຕໍ່ຜູ້ຮັບຜິດຊອບໂຄງການໂດຍອີງໃສ່ແຜນງານ ແຕ່ລະໄລຍະ ແລະ ແຕ່ລະກິດຈະກຳຂອງໂຄງການ.
- ເຂົ້າຮ່ວມກອງປະຊຸມຕາມວັນເວລາຂອງໂຄງການທີ່ໄດ້ກຳນົດໄວ້ໃນແຕ່ລະໄລຍະ.

**ມາດຕາ 3 ແຕ່ງຕັ້ງຄະນະບໍລິຫານ ແລະ ຈັດຕັ້ງປະຕິບັດໂຄງການ ຂັ້ນສູນກາງ ແລະ ທ້ອງຖິ່ນ:**

1. ທ່ານ ທອງຫຼໍ່ ດວງສະຫວັນ, ຫົວໜ້າໜັງສືພິມພາສາຕ່າງປະເທດ ເປັນຫົວໜ້າ
2. ທ່ານ ວໍລະສັກ ປຣະວົງວຽງຄຳ, ຮອງຜູ້ອຳນວຍການວິທະຍຸກະຈາຍສຽງແຫ່ງຊາດລາວ ເປັນຮອງ
3. ທ່ານ ທອງວັນ ບຸນບົວທອງ, ຫົວໜ້າຫ້ອງການ ສະມາຄົມນັກຂ່າວແຫ່ງ ສປປລາວ ຄະນະ
4. ທ່ານ ນາງ ມະໂນລີ ແກ້ວຄູນບໍລິສັກ, ວິຊາການ ວິທະຍຸກະຈາຍສຽງແຫ່ງຊາດລາວ
5. ທ່ານ ນາງ ຈັນສະໝອນ ໄຊປັນຍາ, ວິຊາການ ໜັງສືພິມພາສາຕ່າງປະເທດ
6. ທ່ານ ນາງ ອຸດອນ ຈັນທະວົງ, ວິຊາການ ກົມແຜນການ ແລະ ການຮ່ວມມືສາກົນ
7. ທ່ານ ຜູ້ຕາງໜ້າ ກົມສື່ມວນຊົນ 2 ທ່ານ
8. ທ່ານ ຜູ້ຕາງໜ້າ ຫ້ອງການກະຊວງ ຖວທ
9. ທ່ານ ຜູ້ຕາງໜ້າ ຖວທ ພາກເໜືອ
10. ທ່ານ ຜູ້ຕາງໜ້າ ຖວທ ພາກກາງ
11. ທ່ານ ຜູ້ຕາງໜ້າ ຖວທ ພາກໃຕ້

**ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງ ຄະນະບໍລິຫານ ແລະ ຈັດຕັ້ງປະຕິບັດໂຄງການ ຂັ້ນສູນກາງມີດັ່ງນີ້:**

- ສົມທົບກັບໜ່ວຍງານ ຈັດຕັ້ງກິດຈະກຳໂຄງການ ເພື່ອຂຶ້ນແຜນງົບປະມານກິດຈະກຳຂອງໂຄງການ ເພື່ອຂໍອະນຸ
- ມັດຈາກຜູ້ໃຫ້ທຶນຜ່ານການສັງລວມ ແລະ ກວດກາຂອງຄະນະບໍລິຫານໂຄງການ;
- ເປັນເຈົ້າການສົມທົບກັບ ໜ່ວຍງານຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ ແລະ ຜູ້ໃຫ້ທຶນ ຕາມແຜນທີ່ໄດ້ຮັບຮອງເອົາໂຄງການ;
- ຄຸ້ມຄອງ ແລະ ຕິດຕາມການນຳໃຊ້ ງົບປະມານໃນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ ໃນແຕ່ລະໄລຍະຂອງແຕ່ລະໜ່ວຍງານ ຕາມລະບຽບການ;
- ຂຶ້ນແຜນງົບປະມານກິດຈະກຳຂອງໂຄງການ ເພື່ອຂໍອະນຸມັດຈາກຜູ້ໃຫ້ທຶນຜ່ານການສັງລວມ ແລະ ກວດກາຂອງຄະນະບໍລິຫານໂຄງການ;
- ຕິດຕາມຄະນະຊີ້ນຳໂຄງການ ເຂົ້າຮ່ວມກອງປະຊຸມຄະນະຊີ້ນຳໂຄງການ ປະຈຳໄຕມາດ 3 ເດືອນ/ຄັ້ງ ຕາມການມອບໝາຍຂອງຄະນະຊີ້ນຳໂຄງການ ແລະ ເປັນປະທານກອງປະຊຸມ ລະດັບວິຊາການ ຮ່ວມກັບ ອົງການແຄຣ໌ນານາຊາດປະຈຳ ສປປ ລາວ 1 ເດືອນ/ຄັ້ງ;
- ຕິດຕາມຄະນະບໍລິຫານໂຄງການ ເຂົ້າຮ່ວມກອງປະຊຸມລະດັບວິຊາການ ຮ່ວມກັບ ອົງການແຄຣ໌ນານາຊາດປະຈຳ ສປປ ລາວ 1 ເດືອນ/ຄັ້ງ ພ້ອມທັງເປັນເຈົ້າການຈັດຕັ້ງປະຕິບັດກິດຈະກຳໂຄງການ;

- ຄົ້ນຄວ້າ ແລະ ຄັດເລືອກເອົາບຸກຄະລາກອນ ທີ່ຈະມາເປັນຊ່ຽວຊານພາຍໃນ ປະກອບເຂົ້າໜ່ວຍງານຄົ້ນຄວ້າວິໄຈຮ່ວມກັບຄະນະຮັບຜິດຊອບໂຄງການຂອງ ຝ່າຍອົງການແຄຣ໌ນານາຊາດປະຈຳ ສປປ ລາວ;
- ຈັດຕັ້ງປະຕິບັດວຽກງານຕ່າງໆ ທີ່ກ່ຽວຂ້ອງຕາມການແນະນຳຂອງຄະນະບໍລິຫານງານໂຄງການ;
- ເປັນເຈົ້າການໃນການຈັດຕັ້ງປະຕິບັດ ບັນດາກິດຈະກຳຍ່ອຍຕາມແຜນທີ່ໄດ້ຖືກຮັບຮອງ ຈາກຄະນະຊີ້ນຳໂຄງການຂັ້ນສູນກາງ ແລະ ຜູ້ໃຫ້ທຶນ;
- ປະສານງານກັບ ບັນດາຫ້ອງການ ຂັ້ນແຂວງ-ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອອານວຍຄວາມສະດວກ ໃນການຈັດຕັ້ງປະຕິບັດໂຄງການ;
- ປະສານງານກັບບັນດາການຈັດຕັ້ງທີ່ກ່ຽວຂ້ອງເພື່ອອຳນວຍຄວາມສະດວກໃຫ້ແກ່ ຄະນະບໍລິຫານງານໂຄງການ ແລະ ຄະນະຊີ້ນຳໂຄງການ ເພື່ອຈັດຕັ້ງປະຕິບັດໂຄງການ;
- ປະສານງານກັບຜູ້ໃຫ້ທຶນ, ຊ່ຽວຊານ ຫຼື ອົງການຈັດຕັ້ງສາກົນ ທີ່ມີສ່ວນຮ່ວມຕໍ່ໂຄງການ;
- ສັງລວມແຜນງົບປະມານຂອງໂຄງການ ໃນແຕ່ລະໜ່ວຍງານ ເພື່ອລາຍງານຜ່ານຄະນະບໍລິຫານງານ ແລະ ຂໍອະນຸມັດຈາກຄະນະຊີ້ນຳໂຄງການ ແລະ ຜູ້ໃຫ້ທຶນ;
- ສັງລວມການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການໃນແຕ່ລະໄລຍະເພື່ອລາຍງານຄະນະບໍລິຫານງານໂຄງການ ແລະ ຄະນະຊີ້ນຳໂຄງການ;
- ຊຸກຍູ້ປະສານງານກັບບັນດາຂະແໜງການກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກ ເຊັ່ນ: ການຂໍອະນຸມັດຮັບເອົາຊ່ຽວຊານຕ່າງປະເທດ, ຂໍອະນຸມັດວີຊາ, ຂໍອະນຸຍາດພັກເຊົາ, ຂໍອະນຸມັດທາງການ ສຳລັບການ ຍົກເວັ້ນພາສີນຳເຂົ້າວັດຖຸ, ອຸປະກອນທັງໝົດທີ່ຈຳເປັນສຳລັບຮັບໃຊ້ໂຄງການ ຕາມທີ່ລະບຸໄວ້ໃນບົດບັນທຶກຄວາມເຂົ້າໃຈຂອງໂຄງການ;
- ວຽກງານອື່ນໆ ຕາມການຊີ້ນຳຂອງຄະນະຊີ້ນຳໂຄງການ ແລະ ຄະນະປະສານງານ ຂັ້ນສູນກາງ.

**ມາດຕາ 4 ແຕ່ງຕັ້ງຄະນະກວດກາ, ຕິດຕາມ ແລະ ປະເມີນຜົນໂຄງການ:**

| | |
|---|---|
| 1. ຄະນະກົມກວດກາ, ກະຊວງ ຖວທ | ເປັນຫົວໜ້າ |
| 2. ຄະນະກົມສື່ມວນຊົນ, ກະຊວງ ຖວທ | ເປັນຮອງ |
| 3. ຕາງໜ້າກົມ ແຜນການ ແລະ ການຮ່ວມມືສາກົນ, ກະຊວງ ຖວທ | ຄະນະ |
| 4. ຕາງໜ້າກົມອົງການຈັດຕັ້ງສາກົນ, ກະຊວງການຕ່າງປະເທດ | ຄະນະ |

**ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຄະນະກວດກາ, ຕິດຕາມ ແລະ ປະເມີນຜົນກິດຈະກຳ ມີດັ່ງນີ້:**

- ເຂົ້າຮ່ວມໃນການລົງຢັ້ງຢາມພື້ນທີ່ຂອງໂຄງການ ແລະ ເຂົ້າຮ່ວມກອງປະຊຸມ ການຕິດຕາມໂຄງການ ທຸກໆ 6 ເດືອນ ແລະ ປະເມີນຜົນປະຈຳປີ, ເຄິ່ງສະໄໝ ແລະ ສະຫຼຸບໂຄງການ, ລວມເຖິງການວາງແຜນເພື່ອຈັດຕັ້ງປະຕິບັດບັນດາກິດຈະກຳຍ່ອຍຕ່າງໆ;
- ປະສານສົມທົບກັບຄະນະຊີ້ນຳໂຄງການ ແລະ ອົງການແຄຣ໌ນານາຊາດ ປະຈຳລາວ ເພື່ອສົ່ງເສີມ, ຕິດຕາມ, ກວດກາ ແລະ ປະເມີນຜົນ ບັນດາກິດຈະກຳຂອງໂຄງການ ປະຈຳ 6 ເດືອນ, ປະຈຳປີ, ກາງສະໄໝ ແລະ ສະຫຼຸບໂຄງການ;
- ປະຕິບັດຕາມການຊີ້ນຳຂອງຄະນະນຳ ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 5** ການຈັດຕັ້ງປະຕິບັດ ທຸກກິດຈະກຳທີ່ປິ່ນອ້ອມຂອງໂຄງການ ແມ່ນນຳໃຊ້ງົບປະມານຂອງໂຄງການ ໂດຍໄດ້ຮັບການສະໜັບສະໜູນທຶນຈາກ ສະຫະພາບເອີຣົບ (EU).

**ມາດຕາ 6** ມອບໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຜູ້ທີ່ໄດ້ຮັບການແຕ່ງຕັ້ງຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 7** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ອຸ່ນທວງ ຂາວພັນ

**<u>ສຳເນົາສົ່ງ:</u>**

| | |
|---|---|
| 1. ທ່ານ ຮອງລັດຖະມົນຕີ ກະຊວງ ຖວທ ທ່ານລະ | 1 ສະບັບ |
| 2. ກົມສື່ມວນຊົນ | 1 ສະບັບ |
| 3. ກົມແຜນການ ແລະ ການຮ່ວມມືສາກົນ | 1 ສະບັບ |
| 4. ໜັງສືພິມພາສາຕ່າງປະເທດ | 1 ສະບັບ |
| 5. ວິທະຍຸກະຈາຍສຽງແຫ່ງຊາດລາວ | 1 ສະບັບ |
| 6. ສະມາຄົມນັກຂ່າວແຫ່ງ ສປປ ລາວ | 1 ສະບັບ |
| 7. ກົມອົງການຈັດຕັ້ງສາກົນ, ກະຊວງ ຕປທ | 1 ສະບັບ |
| 8. ພະແນກ ຖວທ ພາກເໜືອ, ກາງ ແລະ ໃຕ້ ພາກລະ | 1 ສະບັບ |

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ 392 /ຖວທ

ນະຄອນຫຼວງວຽງຈັນ, ວັນທີ 30 ສິງຫາ 2023

# ໃບມອບສິດ

**ລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕົກລົງ:**

ມອບສິດໃຫ້ ທ່ານ ສົມສະຫວາດ ພົງສາ, ຫົວໜ້າກົມສື່ມວນຊົນ ຕາງໜ້າໃຫ້ ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ລົງນາມ ບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາງໜ້າໂດຍ ກົມສື່ມວນຊົນ ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ກ່ຽວກັບ **ໂຄງການສ້າງຄວາມເຂັ້ມແຂງ ໃຫ້ສື່ມວນຊົນໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງພາກສັງຄົມທີ່ກ່ຽວຂ້ອງ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ.**

**ເພື່ອເປັນຫຼັກຖານ**, ຈຶ່ງໄດ້ອອກໃບມອບສິດສະບັບນີ້ ເພື່ອໃຊ້ໃນທາງທີ່ຊອບດ້ວຍກົດໝາຍ.

**ລັດຖະມົນຕີ**

ອຸ່ນທວງ ຂາວພັນ